ສຳນັກງານໃຫຍ່

ເລກທີ: 05 /ທຄຕລ 2017
ນະຄອນຫຼວງວຽງຈັນ, ວັນທີ: ..... 28 APR 2017

ມະຕິ

ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2016.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2016 (ກອງປະຊຸມ) ຂຶ້ນໃນເວລາ 14:28 ໂມງ ຫາ 15:45 ໂມງ ຂອງວັນທີ 28/04/2017 ທີ່ຫ້ອງປະຊຸມໃຫຍ່ ຂອງຕະຫຼາດຫຼັກຊັບລາວ, ໂດຍການເປັນປະທານກອງປະຊຸມຂອງ ທ່ານ ປອ. ບຸນເຫຼືອ ສົນໄຊວໍຣະວົງ, ປະທານ ສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມຈຳນວນ 64 ທ່ານ, ຜູ້ມອບສິດ 133 ທ່ານ, ລວມຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີທັງໝົດເທົ່າກັບ 112,620,541 ຮຸ້ນ ເຊິ່ງນັບລວມທັງຮຸ້ນ ທີ່ໄດ້ຮັບການມອບສິດຈຳນວນ 605,687 ຮຸ້ນ; ລວມຈຳນວນຮຸ້ນທີ່ລົງທະບຽນບັນລຸອັດຕາສ່ວນ 82.459% ຂອງ ຈຳນວນຮຸ້ນ ທຄຕລ ທັງໝົດ ຊຶ່ງຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 23,957,059 ຮຸ້ນ ເທົ່າກັບ 17.541% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ກອງປະຊຸມ ໄດ້ຮັບຊາບຕໍ່ການປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ທຄຕລ ປີຜ່ານມາ.

ວາລະທີ 2: ກອງປະຊຸມ ໄດ້ຮັບຊາບຕໍ່ສະພາບການດຳເນີນງານຂອງ ທຄຕລ ໃນປີ 2016.

ວາລະທີ 3: ຮັບຮອງຜົນການດຳເນີນທຸລະກິດ 2016 ຂອງ ທຄຕລ:

- ຍອດຊັບສິນ/ໜີ້ສິນ: 32,238.79 ຕື້ກວ່າກີບ
- ຍອດສິນເຊື່ອທັງໝົດ: 19,240.07 ຕື້ກວ່າກີບ
- ຍອດເງິນຝາກທັງໝົດ: 28,188. 71 ຕື້ກວ່າກີບ.
- ກຳໄລກ່ອນອາກອນ: 217.27 ຕື້ກວ່າກີບ,
- ກຳໄລຫຼັງອາກອນ: 167.98 ຕື້ກວ່າກີບ, (ອາກອນກຳໄລ 24%)

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງ ປະຊຸມ.

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

ວາລະທີ 4: ຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2016. ຫຼັງການຫັກອາກອນກຳໄລ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເງິນປັນຜົນໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2016 ໃນວັນທີ 03/04/2017 ມີອັດຕາການປັນຜົນເທົ່າກັບ 614 ກີບ/ຮຸ້ນ. ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ຮັບຮອງເອົາແຜນການປີ 2017. ມີບາງເປົ້າໝາຍການດຳເນີນທຸລະກິດທີ່ສຳຄັນດັ່ງນີ້:

- ຍອດຊັບສິນ: ເພີ້ມຂຶ້ນ 10% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,
- ຍອດເງິນຝາກ: ເພີ້ມຂຶ້ນ 5% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,
- ຍອດເງິນກູ້: ເພີ້ມຂຶ້ນ 6% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,
- ກຳໄລກ່ອນອາກອນ: 250 ຕື້ກີບ,
- ແຜນຮັບພະນັກງານໃໝ່ທົ່ວລະບົບຈຳນວນ 90 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 1 ສາຂາ ແລະ 11 ໜ່ວຍບໍລິການໃນທົ່ວປະເທດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ຮັບຮອງການແບ່ງເງິນປັນຜົນຂອງ ທຄຕລ ໃນປີ 2017 ແລະ ປີຕໍ່ໆໄປ 1 ຄັ້ງ/ປີ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ຮັບຮອງເອົາ ບໍລິສັດເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນຂອງ ທຄຕລ ປະຈຳປີ 2017, ໃນມູນຄ່າ 93,000 ໂດລາ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ຮັບຮອງແຜນຍຸດທະສາດໄລຍະຍາວຂອງ ທຄຕລ ນັບແຕ່ປີ 2016-2020:

ແຜນຍຸດທະສາດສະບັບນີ້ ສຸມໃສ່ການພັດທະນາລະບົບບໍລິຫານອົງກອນ, ປັບປຸງລະບົບບໍລິຫານຄວາມສ່ຽງໃຫ້ມີຄວາມເຂັ້ມແຂງ, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານ, ນຳໃຊ້ລະບົບເທັກໂນໂລຊີທີ່ມີຄວາມທັນສະໄໝ ແລະ ສ້າງຄວາມຊ່ຽວຊານສະເພາະດ້ານຂອງບຸກຄະລາກອນ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,615,441 ສຽງ, ເທົ່າກັບ 99.995% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 5,100 ສຽງ, ເທົ່າກັບ 0.005 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ຮັບຮອງການຈຳໜ່າຍຮຸ້ນເພີ້ມທຶນ ທຄຕລ:

ຮູບແບບການອອກຮຸ້ນຄື: ໃຫ້ສິດຜູ້ຖືຮຸ້ນເດີມ (RO) ແລະ ຂາຍອອກສູ່ມວນຊົນ (PO) ໃນນັ້ນໃຫ້ສິດຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ 2 ຕໍ່ 1 ຮຸ້ນ. ສ່ວນການຈັດຕັ້ງປະຕິບັດຕົວຈິງ ເຊັ່ນ: ການກຳນົດລາຄາທີ່ເໝາະສົມ, ຈຳນວນຮຸ້ນ ລວມທັງ ການປັບປຸງປ່ຽນແປງບັນດາເງື່ອນໄຂໃດໆທີ່ຈຳເປັນຕໍ່ຜົນສຳເລັດການເພີ້ມທຶນຄັ້ງນີ້ ແມ່ນມອບໃຫ້ສະພາບໍລິຫານ ເປັນຜູ້ມີສິດຕັດສິນ ແລະ ດຳເນີນການ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,533,141 ສຽງ, ເທົ່າກັບ 99.922 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 87,400 ສຽງ, ເທົ່າກັບ 0.078 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 10: ຮັບຮອງການເພີ້ມອັດຕາສ່ວນຮຸ້ນ ທຄຕລ ທີ່ນັກລົງທຶນຕ່າງປະເທດສາມາດຖືຄອງຈາກ 1% ເປັນ 2% ຕໍ່ນັກລົງທຶນໜຶ່ງລາຍ, ຍົກເລີກອັດຕາສ່ວນການຖືຮຸ້ນລວມຂອງຕ່າງປະເທດ 10%, ນັກລົງທຶນຍ່ອຍທົ່ວໄປສາມາດຖືຄອງຮຸ້ນ ທຄຕລ ໄດ້ບໍ່ເກີນ 2% ຕໍ່ນັກລົງທຶນໜຶ່ງລາຍ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ສາມາດຖືຄອງຮຸ້ນ ທຄຕລ ໃນຕະຫຼາດຫຼັກຊັບລາວ ລວມກັນໄດ້ບໍ່ເກີນ 20% ຂອງຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,553,041 ສຽງ, ເທົ່າກັບ 99.94 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 67,500 ສຽງ, ເທົ່າກັບ 0.06% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອ ແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ປອ. ບຸນເຫຼືອ ສິນໄຊວໍຣະວົງ